

# ສໍາເລັດກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ IV ປະຈໍາປີ 2021






ໃນວັນທີ 11-12 ມັງກອນ 2022, ຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດໍາເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ IV ປະຈໍາປີ 2021 ຂຶ້ນຢ່າງເປັນທາງການ, ພາຍໃຕ້ການເປັນປະທານຂອງ **ສະຫາຍ ສອນໄຊ ສິດພະໄຊ ກໍາມະການສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການ ທຫລ**, ມີບັນດາສະຫາຍ ຄະນະປະຈໍາພັກ-ຄະນະພັກ ທຫລ, ຜູ້ຊ່ວຍຄະນະຜູ້ວ່າການ, ເລຂາໜ່ວຍພັກ-ເລຂາຄະນະພັກຮາກຖານ ແລະ ຫົວໜ້າສາຂາ ທຫລ ປະຈໍາພາກ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມດັ່ງກ່າວ ແມ່ນເພື່ອສະຫຼຸບຕີລາຄາການຊີ້ນໍາ-ນໍາພາວຽກງານຮອບດ້ານ ແລະ ສໍາຫຼວດກວດກາການນໍາພາລວມຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ IV ປະຈໍາປີ 2021 ໂດຍລົງເລິກຕີລາຄາຄວາມຮັບຜິດຊອບໜ້າທີ່ການເມືອງຂອງບຸກຄົນຄະນະພັກ ໃນການນໍາພາຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ແລະ ຂອງຂັ້ນເທິງ ຕະຫຼອດໄລຍະ 1 ປີ ຜ່ານມາ, ພ້ອມທັງພິຈາລະນາຮັບຮອງເອົາທິດທາງແຜນການ ໃນປີ 2022 ຢ່າງມີຈຸດສຸມ ເພື່ອພ້ອມກັນບຸກບືນສູ້ຊີ້ນໍາພາຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງໃນແຕ່ລະດ້ານ ດ້ວຍຈິດໃຈບຸກທະລຸ.

ກອງປະຊຸມໄດ້ເປັນເອກະພາບຕໍ່ການຕີລາຄາບົດສະຫຼຸບການຊີ້ນໍາ-ນໍາພາຮອບດ້ານ ຊຶ່ງຕົ້ນຕໍແມ່ນການນໍາພາຈັດຕັ້ງປະຕິບັດໜ້າທີ່ການເມືອງ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ ໂດຍສະເພາະແມ່ນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ສັງລວມແລ້ວ, ໃນ 1 ປີຜ່ານມາ ພາຍໃຕ້ການຊີ້ນໍາ-ນໍາພາຂອງຄະນະພັກ ທຫລ ໃນການເຄື່ອນໄຫວວຽກງານຂອງຂະແໜງທະນາຄານ ໄດ້ຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີຜົນສໍາເລັດ ຫຼາຍດ້ານເປັນຕົ້ນ ທຫລ ຍັງປະຕິບັດບັນດາຄາດໝາຍເງິນຕາ ທີ່ລັດຖະບານກໍ່ຄືມະຕິສະພາແຫ່ງຊາດກໍານົດໄວ້ ຊຶ່ງເປັນປັດໄຈສໍາຄັນໃນການປະກອບສ່ວນຊຸກຍູ້ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໃຫ້ສາມາດເຄື່ອນໄຫວໄດ້ຕາມຄາດໝາຍທີ່ວາງໄວ້.

ໂອກາດດັ່ງກ່າວ, ສະຫາຍ ສອນໄຊ ສິດພະໄຊ ໄດ້ໃຫ້ກຽດມີຄວາມເຫັນໂອ້ລົມ ແລະ ເນັ້ນໜັກ-ຊີ້ນຳໃຫ້ບັນດາ ສະຫາຍ ທີ່ເຂົ້າຮ່ວມກອງປະຊຸມ ຈົ່ງພ້ອມກັນເປັນເອກະພາບສູງ ໃນການນຳເອົາເນື້ອໃນຈິດໃຈຂອງກອງປະຊຸມໃນຄັ້ງນີ້, ໄປສືບຕໍ່ຄົ້ນຄວ້າເຊື່ອມຊຶມກຳແໜ້ນຢ່າງເລິກເຊິ່ງ ແລ້ວກ້າວເຂົ້າສູ່ຂອດລົງເລິກຜັນຂະຫຍາຍ-ຈັດຕັ້ງປະຕິບັດຕົວຈິງ ຢູ່ແຕ່ລະຮາກຖານພັກ-ກົມກອງ ທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃຫ້ກາຍເປັນຮູບປະທຳ; ຊຶ່ງໃນສະເພາະໜ້ານີ້, ຕ້ອງໄດ້ອອກແຮງຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງຕົນ ກໍຄືໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ເພື່ອສະໜັບສະໜູນໃຫ້ບັນດາຄາດໝາຍທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ ຄັ້ງທີ IX ໃຫ້ປະກົດຜົນເປັນຈິງ ໂດຍສະເພາະການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ສູ້ຊົນຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ໝັ້ນທ່ຽງ, ຄຸ້ມຄອງອັດຕາແລກປ່ຽນໃຫ້ຢູ່ໃນຂອບທີ່ກຳ ນົດ, ຄຸ້ມຄອງຮ້ານແລກປ່ຽນ ໃຫ້ເຄື່ອນໄຫວສອດຄ່ອງກັບກົດໝາຍ ແລະ ນິຕິກຳກ່ຽວຂ້ອງຢ່າງເຂັ້ມງວດ; ຄຸ້ມຄອງ ແລະ ພັດທະນາລະບົບສະຖາບັນການເງິນ ໃຫ້ເຂັ້ມແຂງ, ໝັ້ນຄົງ ຢ່າງແທ້ຈິງ; ຄວບຄຸມໜີ້ສິນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້; ສືບຕໍ່ຍູ້ແຮງການເຕີບໂຕຂອງພື້ນຖານເສດຖະກິດແຫ່ງຊາດ ຜ່ານກົນໄກຊຸກຍູ້ສົ່ງເສີມການສະໜອງທຶນໃຫ້ແກ່ໂຄງ ການທີ່ເປັນທ່າແຮງເພື່ອສົ່ງເສີມການຜະລິດ-ສົ່ງອອກສິນຄ້າ ໂດຍເລັ່ງໃສ່ທຸລະກິດຂະໜາດນ້ອຍ-ຂະໜາດກາງ ແລະ ຈຸນລະວິສາຫະກິດ; ສືບຕໍ່ປັບປຸງລະບົບການຊຳລະຂອງລະບົບທະນາຄານ ໃຫ້ລວມສູນ, ທັນສະໄໝ ແລະ ປອດໄພ; ພັດທະນາຕະຫຼາດທຶນໃຫ້ມີບາດກ້າວຂະຫຍາຍຕົວຢ່າງຕັ້ງໜ້າ; ເສີມຂະຫຍາຍການຮ່ວມມືກັບສາກົນໃຫ້ແຂງແຮງ ແລະ ເລິກເຊິ່ງ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ ແລະ ວິຊາການ ເພື່ອພັດທະນາຂະແໜງທະນາຄານຂອງ ສປປ ລາວ ຂຶ້ນເທື່ອລະກ້າວ.

**ຂ່າວພາບ: ສົມພົດ ທຳມະວົງ**

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*